# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ....................................1

II. ການເຄື່ອນໄຫວວຽກງານ ຂອງການນຳຂັ້ນສູງ ແລະ ຄະນະນຳ ຄຕພ. .......................................7

III. ການເຄື່ອໄຫວວຽກງານ ຂອງສາມອົງການຈັດຕັ້ງມະຫາຊົນ ຄຕພ. .......................................11


**ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ**

**ປະຈຳເດືອນ ມີນາ 2024**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

#### 1) ພັກກອມມູນິດຫວຽດນາມ

ວັນທີ 2 ມີນາ 2024, ຫວຽດນາມໄດ້ເຜີຍແຜ່ ບົດຂຽນຂອງ ສະຫາຍ ເລຂາທິການໃຫຍ່ ຫງວຽນຝູ໋ຈ້ອງ ອອກເປັນສະບັບ E-book, ຊຶ່ງເປັນບົດຂຽນທີ່ມີຄຸນຄ່າສຳຄັນທັງດ້ານທິດສະດີ ແລະ ພາກປະຕິບັດ ເນື່ອງໃນໂອກາດສະເຫຼີມສະຫຼອງ 94 ປີແຫ່ງວັນສ້າງຕັ້ງພັກກອມມູນິດຫວຽດນາມ (3 ກຸມພາ 1930-3 ກຸມພາ 2024). ປຶ້ມດັ່ງກ່າວປະກອບດ້ວຍ 3 ພາກ. "ພັກໄດ້ຮັບການສ້າງຕັ້ງ, ນຳພາການຕໍ່ສູ້ເພື່ອເອກະລາດແຫ່ງຊາດ, ປົດປ່ອຍພາກໃຕ້, ໂຮມປະເທດຊາດ", "ພັກນຳພາເພື່ອຍາດແຍ່ງເອົາຜົນສະທ້ອນຈາກສົງຄາມ, ການປະຕິບັດນະວັດຕະກຳ, ການເຊື່ອມໂຍງເຂົ້າກັບສາກົນ, ກໍ່ສ້າງປະເທດເຮົາໃຫ້ຈະເລີນຮຸ່ງເຮືອງຍິ່ງໆຂຶ້ນ", "ເສີມຂະຫຍາຍມູນເຊື້ອຮັກຊາດ, ປະຕິວັດອັນສະຫງ່າລາສີ, ກຳນົດທິດເພື່ອບັນລຸເປົ້າໝາຍການພັດທະນາປະເທດຊາດ ປີ 2025–2030, ກໍ່ສ້າງປະເທດຊາດໃຫ້ນັບມື້ນັບເຂັ້ມແຂງ, ມີວິລະກຳ ແລະ ວິລະຊົນຄົນຫວຽດນາມ."

ວັນທີ 25 ມີນາ 2024, ຢູ່ວໍຊິງຕັນ, ສອງລັດຖະມົນຕີຕ່າງປະເທດ ຫວຽດນາມ ແລະ ສ.ອາເມຣິກາ ໄດ້ພົບປະປຶກສາຫາລື ແລະ ເປັນເອກະພາບກ່ຽວກັບການເສີມຂະຫຍາຍກົນໄກແລກປ່ຽນຂັ້ນລັດຖະມົນຕີການຕ່າງປະເທດ; ປະຕິບັດບັນດາກົນໄກຮ່ວມມື 2 ຝ່າຍທີ່ພວມມີຢູ່ແລ້ວໃຫ້ບັນລຸປະສິດທິຜົນ, ໃນນັ້ນມີການແລກປ່ຽນດ້ານການເມືອງ - ຄວາມໝັ້ນຄົງ - ການປ້ອງກັນຊາດ, ສິດທິມະນຸດ; ເຫັນດີສະເຫຼີມສະຫຼອງ 30 ປີຂອງການຜົວພັນເປັນປົກກະຕິຂອງສອງປະເທດໃນປີ 2025. ນອກນີ້, ສອງຝ່າຍໄດ້ແລກປ່ຽນກ່ຽວກັບສະພາບການຢູ່ທະເລຕາເວັນອອກ ຍົກສູງຄວາມສຳຄັນຂອງສັນຕິພາບ, ຄວາມໝັ້ນຄົງ, ສະຖຽນລະພາບ, ຄວາມເສລີໃນການເດີນທະເລ, ການບິນຢູ່ຂົງເຂດດັ່ງກ່າວ, ແກ້ໄຂບັນດາຄວາມຂັດແຍ້ງກັນໂດຍສັນຕິວິທີ, ສອດຄ່ອງກັບກົດໝາຍສາກົນ.

#### 2) ພັກກອມມູນິດຈີນ

ວັນທີ 4-10 ມີນາ 2024, ສປ.ຈີນ ໄດ້ດຳເນີນກອງປະຊຸມສອງສະພາ(ປະຊາຊົນແຫ່ງຊາດຈີນ (NPC), ຢູ່ຫໍສະພາປະຊາຊົນ ທີ່ນະຄອນຫຼວງປັກກິ່ງ, ມີຜູ້ແທນປະຊາຊົນທົ່ວປະເທດຈີນ ຈາກຊົນເຜົ່າຕ່າງໆ ແລະ ຂະແໜງການຕ່າງໆເກືອບ 3.000 ຄົນ ທີ່ມາຈາກ 34 ອົງການ ເຂົ້າຮ່ວມ. ກອງປະຊຸມໄດ້ຮັບຟັງການລາຍງານວຽກງານ ແລະ ສະເໜີບາງບັນຫາທີ່ສຳຄັນຈາກລັດຖະບານ, ປຶກສາຫາລືກ່ຽວກັບ ວຽກງານການເມືອງ, ເຕົ້າໂຮມຄວາມຮັບຮູ້ທີ່ເປັນເອກະພາບກັນຢ່າງກວ້າງຂວາງ, ຮັບຍັດຕິຂໍ້ສະເໜີທັງໝົດ 5.898 ສະບັບ ແລະ ຜ່ານການພິຈາລະນາແລ້ວ 5.006 ສະບັບ. ຍັດຕິເຫຼົ່ານີ້ຈະໄດ້ຮັບການຍື່ນໄປໃຫ້ຫົວໜ່ວຍທີ່ຮັບຜິດຊອບນຳໄປພິຈາລະນາແກ້ໄຂ ໂດຍສຸມໃສ່ຊຸກຍູ້ການພັດທະນາທີ່ມີຄຸນນະພາບສູງ, ວຽກງານຕົ້ນຕໍຂອງການສ້າງສາປະເທດສັງຄົມນິຍົມທີ່ທັນສະໄໝຮອບດ້ານ ແລະ ວຽກງານຍຸດທະສາດສ້າງຮູບແບບການພັດທະນາແບບໃໝ່, ສຸມໃສ່ຊຸກຍູ້ການຫັນເປັນທັນສະໄໝແບບຈີນ ແລະ ປະຕິບັດບັນຫາຕົ້ນຕໍຂອງປະຊາຊົນ.

ວັນທີ 16 ມີນາ 2024, ບົດຄວາມຂອງ ສະຫາຍ ສີ ຈິ້ນຜິງ, ກ່ຽວກັບ "ການຮັບປະກັນການປະຕິຮູບຂອງພັກໃຫ້ກ້າວໄປໜ້າ" ຖືກພິມເຜີຍແຜ່ໃນວາລະສານ Qiushi ສະບັບທີ 6 ຂອງປີ 2024, ຊຶ່ງມີເນື້ອໃນບາງຕອນວ່າ: ພັກກອມມູນິດຈີນ, ໃນຖານະເປັນພັກກຳອຳນາດຂອງປະເທດທີ່ມີປະຊາກອນຫຼາຍ ບໍ່ພຽງແຕ່ມີທ່າໄດ້ປຽບຢ່າງໃຫຍ່ຫຼວງໃນການປະຕິບັດວຽກງານໃຫຍ່ ແລະ ໄດ້ຮັບຜົນສຳເລັດອັນໃຫຍ່ຫຼວງເທົ່ານັ້ນ ຫາກຍັງປະເຊີນໜ້າກັບບັນດາສິ່ງທ້າທາຍໃນການປົກຄອງຂອງພັກ ແລະ ປະເທດຊາດ; ຮຽກຮ້ອງໃຫ້ມີຄວາມພະຍາຍາມຕື່ມ ໃນການຮັກສາຄວາມມຸ່ງມາດປາຖະໜາ ແລະ

ພາລະກິດແຫ່ງການກໍ່ສ້າງພັກຢ່າງສະເໝີຕົ້ນສະເໝີປາຍ, ເປັນເອກະພາບແນວຄິດ, ເຈດຈຳນົງ ແລະ ການກະທຳຂອງທົ່ວພັກ; ກຳນົດການປົກຄອງຕົນເອງຢ່າງຄົບຖ້ວນ ແລະ ເຂັ້ມງວດ, ພະຍາຍາມບໍ່ຢຸດຢັ້ງ ໃນການປະຕິຮູບຕົນເອງໃຫ້ເດີນໄປສູ່ເປົ້າໝາຍ ແລະ ກ້າວໜ້າຢ່າງບໍ່ສິ້ນສຸດ; ເສີມຂະຫຍາຍການຊີ້ນຳທີ່ເຂັ້ມແຂງກວ່າເກົ່າ; ສ້າງສະພາບແວດລ້ອມດ້ານການເມືອງຢ່າງຕັ້ງໜ້າ ແລະ ມີຄວາມເຂັ້ມແຂງໃຫ້ແກ່ການພັດທະນາ; ສືບຕໍ່ຄົ້ນຄວ້າ ແລະ ປັບປຸງບັນດາມາດຕະການທີ່ມີປະສິດທິຜົນ ເພື່ອຊຸກຍູ້ການເຄື່ອນໄຫວ, ຂໍ້ລິເລີ່ມ ແລະ ກໍ່ສ້າງສະມາຊິກພັກ ແລະ ພະນັກງານ.

**3) ພັກແຮງງານເກົາຫຼີ**

ວັນທີ 23 ມີນາ 2024, ສະຫາຍ ກິມເຈິງອຸນ, ຜູ້ນຳສູງສຸດຂອງ ສປປ ເກົາຫຼີ ໄດ້ສົ່ງສານຄວາມເຫັນໃຈ ເຖິງ ທ່ານ Vladimir Vladimirovich Putin, ປະທານາທິບໍດີລັດເຊຍ ຕໍ່ເຫດການກຸ່ມກໍ່ການຮ້າຍບຸກໂຈມຕີງານຄອນເສີດ ທີ່ນະຄອນຫຼວງມົດສະກູ ໃນວັນທີ 22 ມີນາ 2024 ເຮັດໃຫ້ມີຜູ້ເສຍຊີວິດ 140 ຄົນ ແລະ ບາດເຈັບ 340 ກວ່າຄົນ, ໂດຍມີເນື້ອໃນບາງຕອນວ່າ ໃນນາມລັດຖະບານ ແລະ ປະຊາຊົນ ສປປ ເກົາຫຼີ ສະແດງຄວາມເສຍໃຈ ແລະ ຄວາມເຫັນອົກເຫັນໃຈຢ່າງສຸດຊຶ້ງ ມາຍັງ ລັດຖະບານ, ປະຊາຊົນ ລັດເຊຍ, ຄອບຄົວຜູ້ເສຍຊີວິດ ແລະ ຜູ້ໄດ້ຮັບບາດເຈັບ ຈາກເຫດການດັ່ງກ່າວ; ຫວັງຢ່າງຍິ່ງວ່າ, ລັດຖະບານ ແລະ ປະຊາຊົນລັດເຊຍ ກໍຄືຄອບຄົວຜູ້ປະສົບໄພ ຈະເຂັ້ມແຂງ ແລະ ກ້າວຜ່ານໄລຍະເວລາທີ່ໂສກເສົ້າໄດ້ໂດຍໄວ.

**4) ກຳປູເຈຍ.**

ວັນທີ 5 ມີນາ 2024, ຄະນະກຳມະການເລືອກຕັ້ງແຫ່ງຊາດ ຂອງກຳປູເຈຍ ໄດ້ປະກາດຜົນການເລືອກຕັ້ງສະມາຊິກສະພາສູງຢ່າງເປັນທາງການ, ໂດຍແມ່ນສະມາຊິກສະພາປຫ່ງຊາດ ແລະ ສະມາຊິກສະພາທ້ອງຖິ່ນ ລວມ 11,747 ຄົນໄປໃຊ້ສິດປ່ອນບັດເລືອກເອົາສະມາຊິກສະພາສູງ 58 ທີ່ນັ່ງ ຈາກທັງໝົດ 62 ທີ່ນັ່ງ ແລະ ແຕ່ງຕັ້ງຕື່ມ 4 ທີ່ນັ່ງ (ປະມຸກລັດແຕ່ງຕັ້ງ 2 ທີ່ນັ່ງ ແລະ ສະພາປະຊາຊົນ ແຕ່ງຕັ້ງ 2 ທີ່ນັ່ງ). ມີພັກການເມືອງເຂົ້າຮ່ວມການເລືອກຕັ້ງຄັ້ງນີ້ທັງໝົດ 4 ພັກການເມືອງຄື: ① ພັກປະຊາຊົນກຳປູເຈຍ (Cambodia People Party-CPP); ② ພັກອຸດົມການຂະແມ (Khmer Will Party); ③ ພັກຟຸນຊິນເປັກ (FUNCIPEC Party); ④ ພັກກຳລັງແຫ່ງຊາດ (National Power Party), ຊຶ່ງແມ່ນພັກປະຊາຊົນກຳປູເຈຍ ໄດ້ຮັບໄຊຊະນະດ້ວຍ 55 ບ່ອນນັ່ງ; ພັກອຸດົມການຂະແມ ໄດ້ 3 ບ່ອນນັ່ງ; ສ່ວນອີກສອງພັກແມ່ນບໍ່ໄດ້ຈັກບ່ອນນັ່ງ. ການເລືອກຕັ້ງຄັ້ງນີ້, ພັກປະຊາຊົນ ກຳປູເຈຍ ໄດ້ຮັບຄະແນນສຽງສະໜັບສະໜູນຢ່າງຖ້ວມລົ້ນ ແລະ ທ່ານ ຮຸນເຊັນ, ອະດີດນາຍົກລັດຖະມົນຕີ ໄດ້ຮັບເລືອກຕັ້ງເປັນປະທານສະພາສູງຂອງກຳປູເຈຍ, ເຊິ່ງມີອຳນາດສາມາດຮັກສາການປະມຸກລັດ ໃນເມື່ອປະມຸກລັດ ມີອັນຈຳເປັນພາຍໃນປະເທດ ແລະ ໄປເຄື່ອນໄຫວຕ່າງປະເທດ.

**5) ອາເມລິກາ.**

ວັນທີ 4 ມີນາ 2024, ສານສູງສຸດອາເມລິກາ ໄດ້ຕັດສິນເປັນເອກະສັນ ວ່າ ທ່ານ ດໍໂນລ ທຣໍາ ສາມາດສະໝັກຮັບເລືອກຕັ້ງປະທານາທິບໍດີອາເມລິກາ ໃນປີ 2024, ຊຶ່ງກ່ອນໜ້ານີ້ ສານສູງຂອງລັດ Colorado ຄົ້ນຄວ້າຕັດສິນ ທ່ານ ທຣໍາ ບໍ່ມີສິດທີ່ຈະມີເຂົ້າຮັບສະໝັກເລືອກຕັ້ງປະທານາທິບໍດີ ໃນປີ 2024 ຍ້ອນ ທ່ານ ທຣໍາ ມີສ່ວນພົວພັນກັບຫຼາຍບັນຫາຄວາມບໍ່ສະຫງົບພາຍໃນປະເທດ, ເປັນຕົ້ນເຫດຄວາມວຸ່ນວາຍຢູ່ລັດຖະສະພາອາເມລິກາ ໃນເດືອນ 6/2021 ຜ່ານມາ.

ມາຮອດປັດຈຸບັນ (5/3/2024), ການລິງຫາສຽງຢູ່ບັນດາລັດທົ່ວປະເທດ, ທ່ານ ໄບເດັນ, ຈາກພັກເດໂມແຄັດ, ລັດຖະບານປັດຈຸບັນ ໄດ້ຮັບການສະໜັບສະໜູນໃນ 15 ລັດ ຈາກການເລືອກຕັ້ງຂັ້ນຕົ້ນ. ສ່ວນ ທ່ານ ທຣໍາ, ຈາກພັກຣີພັບບຣີກັນ ໄດ້ 14 ລັດ. ແນວໃດກໍຕາມ, ອີງຕາມຜົນຂອງການສຳຫຼວດ (poll) ຂອງ CBS News ໃນວັນທີ 3 ມີນາ

2024 ຜ່ານມາ ຈາກ ຈຳນວນ 2.159 ຕົວຢ່າງ ເພື່ອປຽບທຽບຜູ້ທີ່ຈະມາດຳລົງຕຳແໜ່ງປະທານາທິບໍດີອາເມຣິກາ, ທ່ານ ໂດນັນທຣຳ ໄດ້ 46%; ທ່ານ ໂຈ ໄບເດັນ ໄດ້ພຽງແຕ່ 33%. ສາເຫດທີ່ເຮັດໃຫ້ ທ່ານ ໂຈ ໄບເດັນ ໄດ້ຄະແນະນິຍົມໜ້ອຍລົງ ຍ້ອນບັນຫາການບໍລິຫານດ້ານເສດຖະກິດ, ອາຊະຍາກຳ ແລະ ຄວາມໝັ້ນຄົງ ຕາມຊາຍແດນຂອງ ສ. ອາເມລິກາ, ບັນຫາສຸຂະພາບທາງຈິດໃຈ ແລະ ຮ່າງກາຍ.

**6) ການເລືອກຕັ້ງລັດຖະສະພາປອກຕຸຍການ**

ວັນທີ 10 ມີນາ 2024, ປອກຕຸຍການ ໄດ້ຈັດການເລືອກຕັ້ງລັດຖະສະພາກ່ອນກຳນົດ ເພື່ອຄັດເລືອກເອົາຜູ້ແທນສະພາ 230 ບ່ອນນັ່ງ ໂດຍມີ 19 ພັກການເມືອງລົງເລືອກຕັ້ງ. ການນັບຄະແນນໃນເບື້ອງຕົ້ນ 99.01%, ມີປະຊາຊົນອອກມາໃຊ້ສິດ 66.2% ເພີ່ມຂຶ້ນຈາກ 51.5% ໃນການເລືອກຕັ້ງປີ 2022. ຊຶ່ງຜົນຂອງການເລືອກຕັ້ງເບື້ອງຕົ້ນ: ພັກສັງຄົມປະຊາທິປະໄຕ (PSD), ພັກແນວທາງກາງຂວາ (ພັກຝ່າຍຄ້ານ) ທີ່ຍຶດໝັ້ນໃນລັດທິອະນຸລັກນິຍົມເສລີ ນຳໂດຍ ທ່ານ Luís Montenegro, ໄດ້ 79 ບ່ອນນັ່ງ (ເພີ່ມຂຶ້ນ 03 ບ່ອນນັ່ງໃນການເລືອກຕັ້ງປີ 2022); ພັກສັງຄົມນິຍົມ (PS), ເປັນພັກການເມືອງກາງຊ້າຍ ທີ່ມີແນວທາງສັງຄົມປະຊາທິປະໄຕ (ນິຍົມສະຫະພາບເອີລົບ ແລະ NATO) ນຳໂດຍທ່ານ Pedro Nuno Santos, ຊຶ່ງເປັນພັກຂອງລັດຖະບານຊຸດປັດຈຸບັນ ໄດ້ 77 ບ່ອນນັ່ງ, ຫຼຸດລົງ 43 ບ່ອນນັ່ງ; ພັກພຽງພໍ (Chega ຫຼື Enough), ຊຶ່ງນຳໂດຍທ່ານ André Ventura, ເປັນພັກການເມືອງຂວາຈັດ ສາມາດຍາດໄດ້ 48 ບ່ອນນັ່ງ (ເພີ່ມຂຶ້ນ 36 ບ່ອນນັ່ງ); ພັກຄວາມຄິດລິເລີ່ມແຫ່ງເສລີພາບ (Liberal Initiative), ນຳໂດຍທ່ານ Rui Rocha, ເປັນພັກການເມືອງກາງຂວາ - ຂວາຈັດ ສາມາດຮັກສາຖານສຽງໄວ້ໄດ້ 08 ບ່ອນນັ່ງ; ພັກກອມມູນິດປອກຕຸຍການ (PCP), ເປັນພັກການເມືອງຝ່າຍຊ້າຍ ທີ່ຍຶດໝັ້ນໃນລັດທິມາກ-ເລນິນ ເປັນແນວຄິດທິດສະດີ, ນຳໂດຍ ທ່ານ Paulo Raimundo, ໄດ້ 04 ບ່ອນນັ່ງ, ຫຼຸດລົງ 02 ບ່ອນນັ່ງ ແລະ ພັກການເມືອງອື່ນໆ 09 ບ່ອນນັ່ງ. ບໍ່ມີພັກການເມືອງໃດສາມາດຍາດໄດ້ບ່ອນນັ່ງເກີນ 50% ຂອງບ່ອນນັ່ງທັງໝົດໃນສະພາ. ສະນັ້ນ, ບັນດາພັກການເມືອງ ຈຶ່ງຈຳເປັນຕ້ອງເຈລະຈາ ເພື່ອຈັດຕັ້ງລັດຖະບານປະສົມ, ແຕ່ຮອດປັດຈຸບັນ ຍັງບໍ່ມີພັກໃດປະກາດຮ່ວມກັນ.

**7) ການເມືອງຮົງກາລີ**

ໃນວັນທີ 11 ມີນາ 2024 ຜ່ານມາ, ລັດຖະສະພາຮົງກາຣີ ໄດ້ຮັບຮອງເອົາການແຕ່ງຕັ້ງ ທ່ານ Tomas Sulyok, ປະທານສານລັດຖະທຳມະນູນ ເປັນປະທານາທິບໍດີຄົນໃໝ່ຂອງຮົງກາຣີ ໂດຍການສະເໜີຂອງພັກຟີເດັສ, ພັກກຳອຳນາດຮ່ວມກັບ ພັກປະຊາຊົນ ຄຣິດສະຕຽນ ປະຊາທິປະໄຕ, ພັກຮ່ວມລັດຖະບານ ແທນ ທ່ານ ນາງ Katalin Novak ທີ່ໄດ້ລາອອກ ຍ້ອນຖືກຕຳນິຈາກພັກການເມືອງຝ່າຍຄ້ານ ຕໍ່ການຕັດສິນໃຈທີ່ຜິດພາດຂອງທ່ານໃນການອະໄພຍະໂທດໃຫ້ແກ່ນັກໂທດພຽງ 01 ຄົນ. ແນວໃດກໍ່ຕາມ ບັນດາພັກການເມືອງຝ່າຍຄ້ານ ຍັງບໍ່ພໍໃຈ ແລະ ບໍ່ຍອມຮັບການແຕ່ງຕັ້ງດັ່ງກ່າວ. ໂດຍຫາວ່າ ທ່ານ Tomas Sulyok ບໍ່ມີປະສົບການທາງດ້ານການເມືອງ, 04 ພັກການເມືອງຝ່າຍຄ້ານ ຈຶ່ງໄດ້ນຳພາປະຊາຊົນຮົງກາຣີ ປະມານ 3.000 ຄົນ ປະທ້ວງ ເພື່ອຮຽກຮ້ອງໃຫ້ມີການເລືອກຕັ້ງປະທານາທິບໍດີຄືນໃໝ່.

**8) ການເລືອກຕັ້ງປະທານາທິບໍດີລັດເຊຍ.**

ວັນທີ 18 ມີນາ 2024, ຄະນະກຳມະການເລືອກຕັ້ງສູນກາງຂອງລັດເຊຍ(CEC) ໄດ້ລາຍງານການເລືອກຕັ້ງປະທານາທິບໍດີລັດເຊຍ ທີ່ຈັດຂຶ້ນ 15-17 ມີນາ 2024, ມີ 113,000,000 ຄົນ ໄປໃຊ້ສິດລົງຄະແນນສຽງເລືອກຕັ້ງແບບເຊິ່ງໜ້າ ແລະ ຜ່ານລະບົບເອເລັກໂຕຣນິກ. ຜົນການເລືອກຕັ້ງ ທ່ານ Vladimir Putin, ປະທານາທິບໍດີ ລັດເຊຍ ຄົນປັດຈຸບັນໄດ້ຮັບຄະແນນ 87.28%; ທ່ານ Nikolay Kharitonov, ຈາກພັກກອມມູນິດລັດເຊຍ ໄດ້ 4,28%; ທ່ານ Vladislav Davankov, ຈາກພັກປະຊາຊົນໃໝ່ ໄດ້ 3,85%; ທ່ານ Leonid Slutsky, ຈາກພັກ LDPR ໄດ້ 3.15%.

ຈາກໄຊຊະນະດັ່ງກ່າວ ເຮັດໃຫ້ ທ່ານ Putin ເປັນປະທານາທິບໍດີ ສະໄໝທີ 5 ນັບແຕ່ ປີ 2000 ເປັນຕົ້ນມາ. ສັງເກດເຫັນວ່າ ການເລືອກຕັ້ງຄັ້ງນີ້ ໄດ້ຄະແນນສູງ ຫຼາຍກວ່າ 4 ຄັ້ງຜ່ານມາ, ສະແດງໃຫ້ເຫັນປະຊາຊົນລັດເຊຍສະໜັບສະໜູນ ຕໍ່ນະໂຍບາຍຂອງທ່ານ Putin ຢ່າງຕໍ່ເນື່ອງ ແລະ ເພີ່ມຂຶ້ນ(ການເລືອກຕັ້ງ ປີ 2000 ໄດ້ 52.94% ; ປີ 2004 ໄດ້ 71,31%; ປີ 2012 ໄດ້ 63,60%; ປີ 2018 ໄດ້ 76,69%).

ພາຍຫຼັງໄດ້ຮັບໄຊຊະນະໃນການເລືອກຕັ້ງ ແລະ ໃນໂອກາດ ການລວມແຫຼມ Crimea ເຂົ້າກັບລັດເຊຍ ຄົບຮອບ 10 ປີ(18/3/2014-18/3/2024), ທ່ານ Putin ໄດ້ສະແດງຄວາມຂອບໃຈປະຊາຊົນລັດເຊຍ ທີ່ໄດ້ອອກມາໃຊ້ສິດເລືອກຕັ້ງຄັ້ງນີ້, ເປັນຄັ້ງປະຫວັດສາດທີ່ມີ ປະຊາຊົນອອກມາໃຊ້ສິດສູງເຖິງ 74% ຂອງພົນລະເມືອງທັງໝົດ ແລະ ສະແດງເຖິງຄວາມເຊື່ອໝັ້ນ ຂອງປະຊາຊົນຕໍ່ການບໍລິຫານປະເທດຜ່ານມາ ແລະ ໃນຕໍ່ໜ້າ. ທ່ານໄດ້ກ່າວບາງຕອນຕື່ມວ່າ: "Crimea ບໍ່ພຽງແຕ່ເປັນອານາເຂດທີ່ສຳຄັນທາງດ້ານຍຸດທະສາດ; ບໍ່ພຽງແຕ່ເປັນປະຫວັດສາດຂອງພວກເຮົາ, ແຕ່ແມ່ນຄວາມພາກພູມໃຈຂອງຂອງປະຊາຊົນລັດເຊຍທັງໝົດ. ທ່ານຍັງກ່າວຕື່ມວ່າ ພວກເຮົາຕ້ອງເປັນອັນໜຶ່ງອັນດຽວກັນຕ້ານທຸກໄພຂົ່ມຂູ່ ຈາກພາຍນອກ. ທ່ານ Putin ກ່າວຕື່ມວ່າ ພ້ອມຈະເຈລະຈາຢຸດຍິງກັບອູແກຣນ ໃນການແຂ່ງຂັນໂອແລມປິກ ທີ່ຝຣັ່ງເປັນເຈົ້າພາບຊຶ່ງຈະຈັດຂຶ້ນ ລະຫວ່າງ ວັນທີ 26 ກໍລະກົດ ຫາ 11 ສິງຫາ 2024.

ຕໍ່ໄຊຊະນະດັ່ງກ່າວ, ໄດ້ມີຜູ້ນຳຫຼາຍປະເທດ ສະແດງຄວາມຊົມເຊີຍ ເຊັ່ນ: ຜູ້ນຳເວເນຊູເອລາ, ສປ.ຈີນ, ສ.ກູບາ ສ.ອິນເດຍ, ອີລານ,ອີຢິບ, ຊາອຸດີອາລາເບຍ, ອາຟຣິກາໃຕ້, ບັນດາປະເທດອາເມລິກາລາຕິນ, ບັນດາປະເທດອະດີດສະຫະພາບໂຊວຽດ, ຜູ້ນຳ ສປປ ລາວ, ສສ.ຫວຽດນາມ ແລະ ປະເທດອື່ນໆ.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ສະພາບພົ້ນເດັ່ນອາຊີ-ປາຊີຟິກ

ໃນວັນທີ 4-14/03/2024 ອາເມລິກາ ແລະ ສ. ເກົາຫຼີ ໄດ້ຝຶກຊ້ອມຮົບປະຈຳປີ ໂດຍເພີ່ມ ຈຳນວນພົນສອງເທົ່າທຽບໃສ່ປີ 2023, ເຮັດໃຫ້ທາງການ ສປປ ເກົາຫຼີ ປະນາມການກະທຳດັ່ງກ່າວ ແລະ ຈະຕິດຕາມຢ່າງໃກ້ຊິດ ລວມທັງການກຽມພ້ອມດຳເນີນກິດຈະການທາງທະຫານ ເພື່ອປົກປ້ອງຄວາມໝັ້ນຄົງຂອງ ສປປ ເກົາຫຼີ ແລະ ໃນວັນທີ 8/03/2024, ທ່ານ ກິມ ເຈີງອຸນ, ຜູ້ນຳສູງສຸດ ສປປ ເກົາຫຼີ ໄດ້ຢ້ຽມຢາມກອງການຝຶກຊ້ອມຍິງປືນໃຫຍ່ຂອງ ໜ່ວຍແນວໜ້າ ທີ່ສາມາດໂຈມຕີເມືອງຫຼວງ ຂອງສັດຕູໄດ້ ແລະ ກຽມພ້ອມສູ້ຮົບທຸກເວລາ.

ໃນວັນທີ 6/3/2024, ໄດ້ມີພິທີສະເຫຼີມສະຫຼອງການພົວພັນຮ່ວມມືອາຊຽນ-ອົດສະຕຣາລີ ຄົບຮອບ 50 ປີ ໂດຍການເປັນປະທານຮ່ວມຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ໃນນາມປະເທດປະທານອາຊຽນ ປີ 2024 ກັບທ່ານ ແອນໂຕ[1]ນີ ອານບານີຊີ (Anthony Albanese), ນາຍົກລັດຖະມົນຕີ ອົດສະຕຣາລີ. ບັນດາຜູ້ນຳອາຊຽນ ແລະ ອົດສະຕຣາລີ ໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມື ອາຊຽນ-ອົດສະຕຣາລີ ຕະຫລອດໄລຍະ 50 ປີ ຜ່ານມາ ແລະ ໄດ້ສ້າງຕັ້ງສູນອາຊຽນ-ອົດສະຕຣາລີ ແລະ ການສະໜອງທຶນການສຶກສາ ພາຍໃຕ້ໂຄງການທຶນ ການສຶກສາອົດສະຕຣາລີເພື່ອອາຊຽນ ລະດັບປະລິນຍາໂທ ຈຳນວນ 55 ທຶນ ແລະ 55 ທຶນ ເພື່ອສຶກສາຄົ້ນຄວ້າໃນຫົວຂໍ້ ຂົງເຂດບູລິມະສິດຂອງແນວຄວາມຄິດອາຊຽນ ວ່າດ້ວຍອິນໂດ-ປາຊີຟິກ; ໄດ້ຮັບຮອງເອົາ 2 ເອກະສານ ຄື: ຖະແຫຼງການວິໄສທັດຜູ້ນຳອາຊຽນ-ອົດສະຕຣາລີ ວ່າດ້ວຍຄູ່ຮ່ວມມືເພື່ອສັນຕິພາບ ແລະ ຄວາມສົມບູນພູນສຸກ ແລະ ຖະແຫຼງການເມວເບິນ ວ່າດ້ວຍການຮ່ວມມືເພື່ອອະນາຄົດ ເພື່ອເປັນທິດທາງໃຫ້ແກ່ການເສີມຂະຫຍາຍ ຄູ່ຮ່ວມຍຸດທະສາດຮອບດ້ານ ລະຫວ່າງ ອາຊຽນ ແລະ ອົດສະຕຣາລີ ໃນຕໍ່ໜ້າ.

## 2) ສະພາບປິ່ນອ້ອມຂໍ້ຂັດແຍ່ງອູແກຣນ-ລັດເຊຍ

ສະຖານະການອູແກຣນ-ລັດເຊຍ ຍັງມີການສູ້ຮົບຢ່າງຕໍ່ເນື່ອງ, ກອງທັບລັດເຊຍສືບຕໍ່ໂຈມຕີ ຢູ່ທາງພາກໃຕ້ຂອງອູແກຣນ ຢູ່ເມືອງ ໂອເດຊາ ແລະ ໄດ້ປ້ອງກັນການໂຈມຕີໃນບັນດາເມືອງໃນພາກຕາເວັນອອກຂອງອູ ແກຣນ. ຫາກວ່າລັດເຊຍສາມາດຄວບຄຸມເມືອງ ໂອເດຊາ ທາງຕອນໃຕ້ໄດ້ ຊຶ່ງຈະເຮັດໃຫ້ອູແກຣນ ໝົດຊ່ອງທາງສູ່ທະເລ, ຍິ່ງເຮັດໃຫ້ອູແກຣນ ກໍຄືປະເທດຕາເວັນຕົກ ກັງວົນເປັນຢ່າງຍິ່ງ, ເນື່ອງຈາກ ໂອເດຊາ ຢູ່ຕິດກັບ ເຂດ Transmistria ແລະ Transmistria ຕິດກັບ Modova ຊຶ່ງເປັນຈຸດຍຸດທະສາດສຳຄັນ ທີ່ອູແກຣນ ແລະ ຕາເວັນຕົກ ຢ້ານກົວລັດເຊຍຈະມາຄວບຄຸມ Transmistria ຕາມຄວາມຮຽກຮ້ອງຂອງ Transmistria ໃຫ້ລັດເຊຍ, ສະພາຂອງ EU ແລະ ສະຫະປະຊາຊາດເຂົ້າມາຊ່ວຍປ້ອງກັນ Transmistria ຈາກການກົດດັນທາງເສດຖະກິດຂອງ Moldova ດ້ວຍການຂຶ້ນພາສີນຳເຂົ້າ ແລະ ສົ່ງອອກຂອງ Transmistria ທີ່ເຮັດໃຫ້ປະຊາຊົນໄດ້ຮັບຜົນກະທົບ. (Moldova ເປັນລັດທີ່ນິຍົມຕາເວັນຕົກ, ຂະນະທີ່ Transmistria ຢາກເຂົ້າເປັນສ່ວນໜຶ່ງຂອງລັດເຊຍ ແລະ ປັດຈຸບັນ ມີຜູ້ຮັກສາສັນຕິພາບລັດເຊຍ ປະຈຳຢູ່ 4500 ຄົນ).

ທ່າມກາງຄວາມກັງວົນຂອງຕາເວັນຕົກ ຕໍ່ຄວາມຂັດແຍ່ງໃນອູແກຣນ, ໃນເດືອນ 2/2024 ປະທານາທິບໍດີຝຣັ່ງຈຶ່ງສະເໜີສົ່ງທະຫານນາໂຕ້ ໄປຊ່ວຍອູແກຣນ, ແຕ່ຫຼາຍປະເທດສະມາຊິກໃນນາໂຕ້ແມ່ນບໍ່ເຫັນດີ, ຊຶ່ງລັດຖະມົນຕີຕ່າງປະເທດອິຕາລີ ກ່າວວ່າ ການສົ່ງທະຫານຂອງ ກຸ່ມນາໂຕໄປອູແກຣນ ຈະສົ່ງຜົນໃຫ້ເກີດຄວາມຂັດແຍ່ງຮຸນແຮງ ຈົນກາຍເປັນສົງຄາມໂລກຄັ້ງທີ III ທີ່ບໍ່ສາມາດຄວບຄຸມໄດ້. ໃນວັນທີ 13 ມີນາ 2024, ສະຫະພາບເອີຣົບ ໄດ້ເຫັນດີຈະສະໜອງງົບປະມານ 5 ຕື້ເອີໂຣ ໃຫ້ອູແກຣນ, ຊຶ່ງຜ່ານມາ EU ໄດ້ຊ່ວຍເຫຼືອອູແກຣນແລ້ວ 88 ຕື້ເອີໂຣ. ສ່ວນອາເມລິກາ ກໍໄດ້ປະກາດຊ່ວຍອູແກຣນອີກ 300 ລ້ານໂດລາສະຫະລັດ ແລະ ອູແກຣນ ຮຽກຮ້ອງໃຫ້ສະຫະພາບເອີຣົບ ພິຈາລະນາຮັບເອົາອູແກຣນເຂົ້າເປັນສະມາຊິກ EU ພາຍຫຼັງໄດ້ສະເໜີສ ແຕ່ປີ 2022 ເປັນຕົ້ນມາ, ແຕ່ຄະນະກຳມາທິການເອີຣົບ ຍັງບໍ່ສາມາດພິຈາລະນາ. ວັນທີ 19 ມີນາ 2024, ເຢຍລະມັນ ໄດ້ປະກາດການຊ່ວຍເຫຼືອ ດ້ານທະຫານແກ່ອູແກຣນ ຮອບໃໝ່ມູນຄ່າ 542 ລ້ານໂດລາ ແລະ ຈະຊ່ວຍເຫຼືອອູແກຣນ ເພີ່ມ 300 ລ້ານເອີໂຣ ເພື່ອເປົ້າໝາຍຈັດຫາລູກປືນໃຫຍ່ໃຫ້ກັບອູແກຣນ. ທ່ານ ໂອລາຟ ຊອນ, ນາຍົກລັດຖະມົນຕີເຢຍລະມັນ ກ່າວວ່າ ຈະບໍ່ຍອມໃຫ້ ລັດເຊຍ ນຳໃຊ້ກຳລັງ ເພື່ອປ່ຽນແປງຊາຍແດນຂອງອູແກຣນ ຫຼື ກຳນົດເງື່ອນໄຂສັນຕິພາບ ແລະ ຢືນຢັນ ວ່າ ການສະໜັບສະໜູນອູແກຣນ ຈະບໍ່ຫຼຸດລົງ. ຄຳເວົ້າດັ່ງກ່າວ ໄດ້ມີຂຶ້ນພາຍຫຼັງມີລາຍງານວ່າ ກອງກຳລັງ ລັດເຊຍ ໄດ້ຂະຫຍາຍພື້ນທີ່ສູ້ຮົບໃນໄລຍະບໍ່ເທົ່າໃດອາທິດທີ່ຜ່ານມາ ແລະ ທ່ານ ລອຍ ອອສຕິນ, ລັດຖະມົນຕີປ້ອງກັນປະເທດອາເມຣິກາ ໄດ້ເຕືອນໃນວັນທີ 19 ມີນາ ວ່າການຢູ່ລອດຂອງ ອູແກຣນ ຈະຕົກຢູ່ໃນຄວາມສ່ຽງ ຖ້າຫາກພັນທະມິດຕາເວັນຕົກລົ້ມເຫຼວໃນການສະໜອງອາວຸດໃຫ້ ອູແກຣນ.

ນອກນີ້, ກອງກຳລັງນາໂຕ້ໄດ້ຊ້ອມຮົບໃກ້ຊາຍແດນຂອງລັດເຊຍເປັນຄັ້ງທຳອິດໃນພາກພື້ນນໍດິກ ທີ່ປະກອບດ້ວຍປະເທດຊຶ່ງມີຊາຍແດນຕິດກັບລັດເຊຍ, ໂດຍໃສ່ຊື່ວ່າ ‘‘Nordic Rasponse 2024’’ ແຕ່ວັນທີ 4-15 ມີນາ 2024, ມີທະຫານ 20.000 ຄົນເຂົ້າຮ່ວມ ຈາກ 13 ປະເທດສະມາຊິກນາໂຕ້, ໃນນັ້ນ, ທະຫານແຟງລັງ 4.000 ຄົນ, ທະຫານຊູແອັດ 4.500 ຄົນ ແລະ ນາໂຕ້ ໄດ້ຈັດການຊ້ອມຮົບວັນທີ 26 ກຸມພາ ເຖິງ 7 ມີນາ 2024 ທີ່ປະເທດເດັນຢາ ເປັນເຈົ້າພາບ.

ຂະນະທີ່, ລັດເຊຍ, ຈີນ ແລະ ອີຣານ ໄດ້ຝຶກຊ້ອມຮົບຮ່ວມກັນ ແຕ່ວັນທີ 12-15 ມີນາ 2024 ຢູ່ອ່າວໂອມານ ໂດຍໃສ່ຊື່ວ່າ "Maritime Security Belt - 2024" ມີຈຸດປະສົງຮ່ວມກັນຮັກສາຄວາມໝັ້ນຄົງທາງທະເລ, ຊຶ່ງເປັນຄັ້ງທີ 5 ນັບແຕ່ປີ 2019 ເປັນຕົ້ນມາ ທີ່ ແລະ ມີ ອາເຊກໄບຊານ, ກາຊັກສະຖານ, ປາກິດສະຖານ, ອິນເດຍ, ໂອມານ ແລະ ອາຟຣິກາໃຕ້ ເປັນຜູ້ສັງເກດການຊ້ອມຮົບດັ່ງກ່າວ.

ວັນທີ 22 ມີນາ 2024, ກຸ່ມກໍ່ການຮ້າຍ ໄດ້ໃຊ້ອາວຸດປືນກວດຍິງຜູ້ຄົນ ທີ່ເຂົ້າມາຊົມການສະແດງຄອນເສີດ ຂອງວົງດົນຕີ ປິກນິກ ທີ່ຫໍສະແດງຄອນເສີດ Crocus City Hall ທີ່ ເມືອງກຣາສະໂນກໍສກ໌ ຢູ່ເຂດພາກເໜືອຂອງນະຄອນຫຼວງມົດສະກູ ພ້ອມທັງຈູດໄຟເຜົາຫໍສະແດງດັ່ງກ່າວ, ຊຶ່ງໄດ້ເຮັດໃຫ້ມີຄົນເສຍຊີວິດຫຼາຍກວ່າ 145 ຄົນ ແລະ ໄດ້ຮັບບາດເຈັບເປັນຫຼາຍກ່ວາ 340 ຄົນ. ປັດຈຸບັນ, ໄດ້ຈັບຕົວຜູ້ຖືກສົງໄສ 20 ຄົນ ລວມເຖິງຜູ້ກໍ່ເຫດ 4 ຄົນ ທີ່ມີສ່ວນຮ່ວມໂດຍກົງໃນ ເຫດການຍິງໂຈມຕີ ດັ່ງກ່າວ.

**3) ຂໍ້ຂັດແຍ່ງຢູ່ຕາເວັນອອກກາງ**

ການປະທະກັນລະຫວ່າງອິດສະຣາແອນ ແລະ ກຸ່ມຮາມາສ ລວມທັງກຸ່ມຕ່າງໆທີ່ສະໜັບສະໜູນປາແລັດສະຕິນ ຍັງບໍ່ມີທ່າທີ່ຈະຢຸດຕິລົງ, ໂດຍອິດສະຣາແອນ ສືບຕໍ່ໂຈມຕີ ເມືອງ Rafah ທີ່ພວກເຂົາກ່າວຫາວ່າ ເປັນຖານທີ່ໝັ້ນສຸດທ້າຍຂອງກຸ່ມ ຮາມາສ ຢ່າງຕໍ່ເນື່ອງ. ສ່ວນ ການໂຈມຕີລະຫວ່າງອິດສະຣາແອນ ແລະ ກຸມຮິດບອນເລາະ ໃນພາກໃຕ້ຂອງລີບັງກໍນັບມື້ນັບດຸເດືອດ, ຊຶ່ງຫຼ້າສຸດ ກຸ່ມຮິດບອນເລາະ ໄດ້ໂຈມຕີ ພື້ນທີ່ກະສິກຳ ທາງພາກເໜືອຂອງອິດສະຣາແອນ ເຮັດໃຫ້ພື້ນທີ່ການຜະລິດ ໄດ້ຮັບຄວາມເສຍຫາຍເປັນວົງກວ້າງ, ແຮງງານຕ່າງດ້າວຈຳນວນໜຶ່ງບາດເຈັບ ແລະ ເສຍຊີວິດ; ວັນທີ 7/3/2024, ກຸ່ມຮູຕີ ໄດ້ໂຈມຕີເຮືອສິນຄ້າຂອງອາເມລິກາ ໃນທະເລແດງ ເຮັດໃຫ້ມີລູກເຮືອເສຍຊີວິດ 3 ຄົນ, ຊຶ່ງອາເມລິກາ ຖະແຫຼງວ່າ ຈະຕອບໂຕ້ຄືນຢ່າງໜັກ.

ຕໍ່ຄວາມຂັດແຍ້ງັ່ງກ່າວ, ສອງຝ່າຍໄດ້ເຈລະຈາຢຸດຍິງຫຼາຍຄັ້ງ, ແຕ່ບໍ່ປະສົບຜົນສຳເລັດ. ວັນທີ 19 ມີນາ 24, ທ່ານ Antonio Guterres, ເລຂາທິການໃຫຍ່ອົງການສະຫະປະຊາຊາດ ໄດ້ຮຽກຮ້ອງໃຫ້ຢຸດຍິງທັນທີ ເພື່ອປ້ອງກັນການ ເກີດສະພາວະການຂາດອາຫານຢູ່ແຫຼມກາຊາ ແລະ ປ້ອງກັນການສູນເສຍ ທັງຊີວິດ ແລະ ຊັບສິນ ຂອງສອງຝ່າຍ ແລະ ເພື່ອຄວາມສະຫງົບຂອງພາກພື້ນ. ກະຊວງການຕ່າງປະເທດ ຂອງລີບັງ ຮຽກຮ້ອງໃຫ້ ປະຊາຄົມໂລກ ສະໜັບສະໜູນໜ່ວຍງານ UNRWA ຂອງ ສປຊ ເພື່ອຊ່ວຍເຫຼືອດ້ານມະນຸດສະທຳແກ່ຜູ້ລີ້ໄພຊາວປາແລັດສະຕິນໃນລີບັງ ແລະ ປະເທດໃກ້ຄຽງ.

ວັນທີ 17 ມີນາ 2024, ທູດ ສປ.ຈີນ ທ່ານ ຫວັງ ເຄີຈຽນ (Wang Kejian) ເອກອັກຄະລັດຖະທູດປະຈຳປະເທດ ສ.ລີບັງ, ໄດ້ພົບກັບ ທ່ານ ອິສເມລ ຮານິເຢ (Ismail Haniyeh) ຜູ້ນຳທາງການເມືອງຂອງກຸ່ມ ຮາມາສ ທີ່ປະເທດກາຕ້າ ເພື່ອຫາລືກ່ຽວກັບຄວາມຂັດແຍ້ງຢູ່ໃນກາຊາ ເປັນຄັ້ງທຳອິດ ນັບແຕ່ ເກີດຄວາມຂັດແຍ້ງ ເມື່ອວັນທີ 7 ຕຸລາ 2023 ຜ່ານມາ. ປັດຈຸບັນ, ປະຊາຊົນຊາວປາແລັດສະຕິນເສຍຊີວິດ ໄປແລ້ວປະມານ 32,000 ຄົນ, ໃນນັ້ນ, ສອງສ່ວນສາມ ແມ່ນແມ່ຍິງ ແລະ ເດັກນ້ອຍ. ເອກອັກຄະລັດຖະທູດ ທ່ານ ຫວັງ ເຄີຈຽນ ຍັງໄດ້ພົບປະກັບເຈົ້າໜ້າທີ່ຂອງອິສຣາແອນ ເພື່ອຫາທາງອອກໃນການແກ້ໄຂສະຖານະການແຫຼມກາຊາ.

## II.ການເຄື່ອນໄຫວວຽກງານ ຄະນະນຳ ຄຕພ.

**1) ຄະນະພົວພັນຕ່າງປະເທດສູນກາງພັກ ຈັດພິທີ ມອບ-ຮັບ ໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2023.**



ວັນທີ 7 ມີນາ 2024 ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດພິທີ ມອບ-ຮັບໃບຢັ້ງຢືນ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ມອບໃບຢັ້ງຢືນ ກຳມະບານ 5 ເປັນເຈົ້າ ປະຈຳປີ 2023 ພາຍໃຕ້ການເປັນປະທານຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ມີບັນດາສະຫາຍໃນຄະນະພັກ, ບັນດາຄະນະໜ່ວຍພັກ ແລະ ສະມາຊິກພັກ ພ້ອມດ້ວຍພະນັກງານເຂົ້າຮ່ວມທັງໝົດ.

ທີ່ປະຊຸມໄດ້ຜ່ານບົດສະຫຼຸບຜົນການຈັດຕັ້ງປະຕິບັດໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2023 ແລະ ທິດທາງແຜນການ ຂອງບັນດາໜ່ວຍພັກ ຄຕພ. ພ້ອມກັນນັ້ນ, ສະຫາຍເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ມອບໃບຢັ້ງຢືນ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ 3 ໜ່ວຍພັກ ແລະ ມອບໃບຢັ້ງຢືນ ກຳມະບານ 5 ເປັນເຈົ້າ ປະຈຳປີ 2023 ໃຫ້ສະຫະພັນກຳມະບານ ຄຕພ ແລະ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດຂອງທຸກໜ່ວຍພັກ ຍາດມາໄດ້ ແລະ ໄດ້ຮຽກຮ້ອງໃຫ້ບັນດາໜ່ວຍພັກ ເອົາໃຈໃສ່ເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ສອດຄ່ອງກັບບັນດານິຕິກຳຂອງພັກວາງອອກ.

**2) ຄະນະພົວພັນຕ່າງປະເທດສູນກາງພັກເຜີຍແຜ່ເຊື່ອມຊຶມວັນສຳຄັນຂອງພັກ-ຂອງຊາດ ແລະ ເປີດຂະບວນການແຂ່ງຂັນຍ້ອງຍໍ ຮັກຊາດ ແລະ ພັດທະນາ ປະຈຳປີ 2024.**



ໃນວັນທີ 22 ມີນາ 2024, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດປາຖະກະຖາເຊື່ອມຊຶມເອກະສານ ຄື: ວັນສ້າງຕັ້ງພັກ ປະຊາຊົນ ປະຕິວັດລາວ ຄົບຮອບ 69 ປີ (22/3/1955-22/3/2024); ວັນຄຽດແຄ້ນ ຂອງປະຊາຊົນລາວ ລະນຶກນັກຮົບເສຍອົງຄະ ແລະ ເສຍສະຫຼະຊີວິດເພື່ອປະເທດຊາດ ຄົບຮອບ 78 ປີ (21/3/1946-21/3/2024); ແລະ ເປີດຂະບວນການແຂ່ງຂັນຍ້ອງຍໍ ຮັກຊາດ ແລະ ພັດທະນາ ໂດຍການ ເປັນ ປະທານ ແລະ ໃຫ້ກຽດເຜີຍແຜ່ຂອງສະຫາຍທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີ

ບັນດາສະຫາຍໃນຄະນະບໍລິຫານງານພັກ, ສະມາຊິກພັກ, ພະນັກງານທີ່ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ 130 ສະຫາຍ.

ສະຫາຍ ທອງສະຫວັນ ພົມວິຫານ, ໄດ້ຍົກໃຫ້ເຫັນເຖິງການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າ ຕ້ານກັບພວກລ່າເມືອງຂຶ້ນຝຣັ່ງ ນັບແຕ່ປີ 1930 ເປັນຕົ້ນມາເວົ້າລວມເວົ້າສະເພາະແມ່ນບັ້ນຮົບປ້ອງກັນເມືອງທ່າແຂກໃນເດືອນມີນາ ປີ 1946 ເຊິ່ງນໍາພາການຕໍ່ສູ້ໂດຍ ປະທານ ສຸພານຸວົງ. ຕ້ານພວກລ່າເມືອງຂຶ້ນຝຣັ່ງ ແລະ ລູກແຫຼ່ງຕີນມືຂອງ ພວກເຂົາທີ່ໄດ້ສ້າງໂທດກໍາທີ່ບໍ່ມີວັນລືມ ໃຫ້ແກ່ປະຊາຊົນລາວ, ພວກເຂົາໄດ້ເຂັ່ນຂ້າປະຊາຊົນຜູ້ບໍລິສຸດ 3.000 ກ່ວາຄົນ ເຮືອນຊານບ້ານຊ່ອງຖືກທໍາລາຍເປັນຈໍານວນຫລວງຫຼາຍ ຄອບຄົວຜົວ-ເມຍ, ພໍ່-ແມ່-ລູກຖືກພັດພາກຈາກກັນ ລູກກາຍເປັນລູກກໍາພ້າ-ກໍາພອຍ ຍ້ອນການກະທໍາອັນໄຮ້ມະນຸດສະທໍາ ແລະ ໂຫດຮ້າຍປ່າເຖື່ອນດັ່ງກ່າວນັ້ນ ສປປ.ລາວ ຈຶ່ງຖືເອົາວັນທີ 21 ມີນາ ເປັນວັນຄຽດແຄ້ນຂອງປະຊາຊົນລາວ ຕໍ່ສັດຕູຜູ້ຮຸກຮານ ພ້ອມນີ້ ພັກ-ລັດ ຍັງໄດ້ກໍານົດເອົາວັນທີ 21 ມີນາ ເປັນວັນລະນຶກເຖິງນັກຮົບເສຍອົງຄະ ແລະ ເສຍສະຫຼະຊີວິດເພື່ອປະເທດຊາດ ນັບແຕ່ປີ 2014 ເປັນຕົ້ນມາ.

ນອກຈາກນີ້, ສະຫາຍ ທອງສະຫ້ວນ, ຍັງໄດ້ເລົ່າມູນເຊື້ອ ການກໍາເນີດ ແລະ ການຂະຫຍາຍຕົວຂອງພັກ ປະຊາຊົນປະຕິວັດລາວ ຕະຫຼອດໄລຍະ 69 ປີ ຜ່ານມາ, ໄດ້ຍົກໃຫ້ເຫັນການກໍາເນີດ, ທາດແທ້ ແລະ ອຸດົມການຂອງພັກ ຜົນງານທີ່ຍາດມາໄດ້ໃນແຕ່ລະໄລຍະນໍາພາປົດປ່ອຍປະເທດຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ໃນຕອນທ້າຍ ສະຫາຍ ວາລະໄຊ ເລັ່ງສະຫວັດ ໄດ້ມີຄໍາເຫັນຕໍ່ພິທີເປີດຂະບວນການແຂ່ງຂັນຍ້ອງຍໍຮັກຊາດ ແລະ ພັດທະນາ ຂອງຄະນະພົວພັນຕ່າງປະເທດສູນກາງພັກ ຮອດປີ 2025 ໂດຍເນັ້ນໃຫ້ບັນດາກົມຖືເອົາການແຂ່ງຂັນຮັກຊາດ ແລະ ພັດທະນາ ຕິດພັນກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເພື່ອເຮັດໃຫ້ ສອງວຽກດັ່ງກ່າວໄປໃນລວງດຽວກັນ ທີ່ສູນກາງພັກ ແລະ ລັດຖະບານວາງອອກ.

### 3) ຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງຄະນະຜູ້ແທນສະມາຄົມມິດຕະພາບອົດສະຕຣາລີ-ລາວ.



ວັນທີ 20 ມີນາ 2024, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ(ຄຕພ), ທ່ານ ທອງສະຫວັນ ພົມວິຫານ, ກໍາມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ນາງ ລິນດາ ວໍໄທຊິ່ງ (Mme Lynda Worthaisong), ປະທານສະມາຄົມມິດຕະພາບ ອົດສະຕຣາລີ-ລາວ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ.

ທ່ານ ທອງສະຫວັນ, ໄດ້ຊົມເຊີຍ ແລະ ຕີລາຄາສູງ ຕໍ່ການມາຢ້ຽມຢາມ ສປປ ລາວ ຂອງຄະນະຜູ້ແທນສະມາຄົມມິດຕະພາບອົດສະຕຣາລີ-ລາວ, ເປັນການປະກອບສ່ວນສໍາຄັນໃນການເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດກໍຄືປະຊາຊົນສອງຊາດລາວ ແລະ ອົດສະຕຣາລີ ໃຫ້ນັບມື້ໄດ້ຮັບການພັດທະນາ ແລະ ກ້າວຂຶ້ນສູ່ລະດັບໃໝ່; ສະແດງຄວາມຊົມເຊີຍຕໍ່ການສ້າງຕັ້ງ ສະມາຄົມ ອົດສະຕາລີ-ລາວ ໃນປີ 2023 ຜ່ານມາ.

**4) ຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງຄະນະຜູ້ແທນສະມາຄົມມິດຕະພາບ ສ.ເກົາຫຼີ - ລາວ.**



ວັນທີ 20 ມີນາ 2024, ທ່ານ ທອງສະຫວັນ ພົມວິຫານ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ໂອ ມຽງ ຮວັນ (Oh Myung Hwan), ປະທານສະມາຄົມມິດຕະພາບ ສ.ເກົາຫຼີ - ລາວ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ.

ສອງຝ່າຍໄດ້ຕີລາຄາສູງ ຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສອງປະເທດ ກໍຄື ປະຊາຊົນສອງຊາດ ລາວ - ສ.ເກົາຫຼີ ທີ່ນັບມື້ໄດ້ຮັບການພັດທະນາ ແລະ ກ້າວຂຶ້ນສູ່ລະດັບໃໝ່ຢ່າງບໍ່ຢຸດຢັ້ງ. ພ້ອມນັ້ນ, ຍັງໄດ້ຊົມເຊີຍຕໍ່ການພົວພັນຮ່ວມມືທີ່ດີ ຕະຫຼອດໄລຍະເກືອບສອງທົດສະວັດທີ່ສ້າງຕັ້ງສະມາຄົມມິດຕະພາບຮ່ວມກັນ ລະຫວ່າງ ລາວ - ສ.ເກົາຫຼີ ແລະ ສ.ເກົາຫຼີ - ລາວ ໃນການເຮັດບົດບາດການທູດປະຊາຊົນ ເພື່ອສະໜັບສະໜູນການພົວພັນດ້ານລັດຂອງສອງປະເທດໃຫ້ມີປະສິດທິຜົນຍິ່ງໆຂຶ້ນ ໂດຍສະເພາະຊຸກຍູ້ການຮ່ວມມືໃນຂະແໜງເສດຖະກິດ, ການຄ້າ, ການລົງທຶນ, ການສຶກສາ, ວັດທະນະທໍາ ແລະ ການທ່ອງທ່ຽວ ເພື່ອນໍາເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ສ.ເກົາຫຼີ.

ຄະນະຜູ້ແທນດັ່ງກ່າວ ຍັງໄດ້ເຂົ້າຮ່ວມພິທີມອບ-ຮັບອາຄານໂຮງຮຽນປະຖົມສົມບູນບ້ານກ້ານ, ເມືອງຊໍາເໜືອ, ແຂວງຫົວພັນ, ຈໍານວນ 5 ຫ້ອງຮຽນ, 1 ຫ້ອງການຄູ ແລະ ຫ້ອງນໍ້າຍິງ-ຊາຍ ລວມມູນຄ່າການກໍ່ສ້າງ 67.000 ໂດລາສະຫະລັດ, ຊຶ່ງເປັນໂຮງຮຽນມິດຕະພາບແຫ່ງທີ 3 ທີ່ໄດ້ຮັບການສະໜັບສະໜູນທຶນຈາກສະມາຄົມມິດຕະພາບ ສ.ເກົາຫຼີ - ລາວ. ຄະນະຜູ້ແທນຍັງໄປຢ້ຽມຢາມແຂວງໄຊສົມບູນແລະ ມອບເຄື່ອງຊ່ວຍເຫຼືອຄອມພິວເຕີໂນດບຸກ 8 ເຄື່ອງ, ຢາປົວພະຍາດ ແລະ ອຸປະກອນການສຶກສາຈໍານວນໜຶ່ງ ລວມມູນຄ່າ 7.000 ໂດລາສະຫະລັດ ແລະ ໄປທ່ຽວຊົມສະຖານທີ່ທ່ອງທ່ຽວທາງປະຫວັດສາດ, ວັດທະນະທໍາ ແລະ ທໍາມະຊາດ ຈໍານວນໜຶ່ງ ຢູ່ນະຄອນຫຼວງວຽງຈັນແຂວງຫົວພັນ ແລະ ແຂວງໄຊສົມບູນ.

**5) ຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຮອງ ລມຕ ກະຊວງການຕ່າງປະເທດ ແຫ່ງ ສາທາລະນະລັດ ເບລາຣຸດຊີ**



ວັນທີ 13 ມີນາ 2024, ທີ່ສຳນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ທ່ານ ເຢັບເກນີ ເຊັດສະຕານົບ, ຮອງລັດຖະມົນຕີກະຊວງການຕ່າງປະເທດ ແຫ່ງ ສາທາລະນະລັດ ເບລາຣຸດຊີ.

ໃນໂອກາດນີ້, ສອງຝ່າຍໄດ້ຕີລາຄາສູງການຮ່ວມມືຕະຫຼອດ 30 ປີ ຜ່ານມາ ແລະ ແຈ້ງໃຫ້ກັນແລະ ກັນຊາບກ່ຽວກັບການພັດທະນາປະເທດຊາດ ແລະ ສະພາບການທີ່ພົ້ນເດັ່ນ ແລະ ເຫັນດີສືບຕໍ່ການພົວພັນຮ່ວມມືໃຫ້ໄດ້ຮັບການພັດທະນາຂຶ້ນສູ່ລະດັບໃໝ່ ກໍ່ຄື ການເພີ່ມທະວີການຮ່ວມມືໃນຂົງເຂດການເມືອງ, ເສດຖະກິດ, ການຄ້າ-ການລົງທຶນ, ສາທາລະນະສຸກ, ການສຶກສາ, ການພົວພັນດ້ານພັກ ແລະ ການທູດປະຊາຊົນ ເພື່ອນຳເອົາຜົນປະໂຫຍດມາສູ່ປະຊາຊົນສອງຊາດ ລາວ-ເບລາຣຸດຊີ.

6) **ຄະນະຜູ້ແທນພັກ ປປ ລາວ ສຳເລັດການເຂົ້າຮ່ວມກອງປະຊຸມອົງການຊາວໜຸ່ມໄອແຄັບ ຄັ້ງທີ 7 (The ICAPP Youth Wing)**




ຄະນະຜູ້ແທນພັກ ປປ ລາວ ນຳໂດຍ ຜູ້ຕາງໜ້າຈາກສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ປະຈຳປະເທດມົງໂກລີ, ໄດ້ເຂົ້າຮ່ວມກອງປະຊຸມຊາວໜຸ່ມໄອແຄັບ ຄັ້ງທີ 7 ພາຍໃຕ້ຫົວຂໍ້ "ພວກເຮົາເຫັນດີໃຫ້ມີຊາວໜຸ່ມໃນສະພາ" (We Say Yes to Youth in Parliament), ຈັດຂຶ້ນທີ່ນະຄອນຫຼວງອູລານບາຕໍ, ປະເທດມົງໂກລີ ໃນລະຫວ່າງວັນທີ 23-26 ກຸມພາ 2024 ໂດຍການເປັນເຈົ້າພາບຂອງພັກປະຊາຊົນມົງໂກລີ, ມີຜູ້ເຂົ້າຮ່ວມທັງໝົດ 176 ສະຫາຍຈາກ 18 ພັກການເມືອງ ທີ່ມາຈາກ 12 ປະເທດ, ອົງການສັງຄົມນິຍົມສາກົນ ແລະ ສະຫະພັນລັດຖະສະພາສາກົນ.

ກອງປະຊຸມຄັ້ງນີ້, ໄດ້ປຶກສາຫາລື ກ່ຽວກັບ ບົດບາດ, ພຶດຕິກຳ ແລະ ຄວາມສາມາດຂອງຊາວໜຸ່ມໃນພາກພື້ນ. ບັນດາຜູ້ແທນກອງປະຊຸມ ໄດ້ແລກປ່ຽນບົດບາດຂອງຊາວໜຸ່ມຢູ່ໃນບັນດາອົງການບໍລິຫານຂອງພັກ-ລັດ ໂດຍສະເພາະໃນສະພາ ເຊິ່ງໄດ້ມີອັດຕາສ່ວນທີ່ຫຼຸດລົງ; ການເພີ່ມສິດຂອງຊາວໜຸ່ມໃນການສາມາດມີສ່ວນຮ່ວມໃນລະບົບການເມືອງດ້ວຍຫຼາຍຮູບການ ເປັນຕົ້ນແມ່ນ ການເຂົ້າຮ່ວມການເລືອກຕັ້ງ, ລົງຄະແນນສຽງ ແລະ ຮັບເລືອກຕັ້ງເຊິ່ງຈະປະກອບສ່ວນເຂົ້າໃນແນວຄິດ "ການຫັນເປັນສະພາ 3D" ກໍຄື ດີຈີຕອນ, ປະຊາທິປະໄຕ ແລະ ມີເປົ້າໝາຍ (Digital, Democratic, Deliberative). ກອງປະຊຸມຄັ້ງນີ້ ຍັງໄດ້ຮັບຊາບ ກ່ຽວກັບ ສະມາຊິກຫ້ອງການຊາວໜຸ່ມໄອແຄັບຊຸດໃຫມ່ທີ່ຈະປະຕິບັດໜ້າທີ່ໄລຍະປີ 2024-2025.

ກອງປະຊຸມ ອອກຖະແຫຼງການຮ່ວມ ຊຶ່ງໄດ້ເນັ້ນໜັກໃຫ້ເຫັນເຖິງບົດບາດສຳຄັນຂອງບັນດາພັກການເມືອງ ກໍຄືການຊຸກຍູ້ລັດຖະບານ ຂອງບັນດາປະເທດໃຫ້ມີນະໂຍບາຍສົ່ງເສີມຊາວໜຸ່ມ, ສົ່ງເສີມການເຄື່ອນໄຫວຮ່ວມກັນຂອງບັນດາພັກການເມືອງໃນອາຊີ ເພື່ອຊຸກຍູ້ ແລະ ເສີມຂະຫຍາຍການມີສ່ວນຮ່ວມຂອງຊາວໜຸ່ມໃນສະພາ.

### 7) ຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ເອກອັກຄະລັດຖະທູດ ແຫ່ງ ອິດສະຕຣາລີ .



ວັນທີ 29 ກຸມພາ 2024, ທີ່ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງ ທ່ານ ນາງ ເມແກັນ ຈອນສ (Megan Jones), ເອກອັກຄະລັດຖະທູດວິສາມັນ ຜູ້ມີອຳນາດເຕັມ ແຫ່ງ ອິດສະຕຣາລີ ປະຈຳ ສປປ ລາວ ຄົນໃໝ່.

ສອງຝ່າຍໄດ້ຕີລາຄາສູງ ຕໍ່ການພົວພັນຮ່ວມມືຂອງສອງປະເທດໃນໄລຍະ 72 ປີ ຜ່ານມາ ແລະ ໄດ້ລາຍງານສະພາບການທີ່ພົ້ນເດັ່ນຂອງປະເທດຕົນໃຫ້ຮັບຊາບ. ພ້ອມທັງເອກະພາບ ຈະສືບຕໍ່ສືບຕໍ່ປະສານສົມທົບກັນຢ່າງແໜ້ນແຟ້ນ ເພື່ອຮ່ວມກັນຊອກຫາຊ່ອງທາງຍົກລະດັບການຮ່ວມມືດ້ານເສດຖະກິດ-ການຄ້າ, ການພົວພັນດ້ານພັກ ແລະ ການທູດປະຊາຊົນ ລະຫວ່າງ ສອງປະເທດ ໃນຕໍ່ໜ້າ ເພື່ອປະກອບສ່ວນຊຸກຍູ້ ແລະ ເພີ່ມພູນຄູນສ້າງສາຍພົວພັນສອງປະເທດ, ນຳເອົາຜົນປະໂຫຍດຕົວຈິງມາສູ່ ປະຊາຊົນສອງຊາດ ລາວ-ອິດສະຕຣາລີ ກໍຄື ປະກອບສ່ວນເຂົ້າໃນພາລະກິດເສີມສ້າງສັນຕິພາບ, ມິດຕະພາບ ແລະ ການຮ່ວມມືໃນພາກພື້ນ ແລະ ໃນໂລກ.

## III.ການເຄື່ອໄຫວວຽກງານ ຂອງສາມອົງການຈັດຕັ້ງມະຫາຊົນ ຄຕພ.

### ຄຕພ ເຜີຍແຜ່ເຊື່ອມຊຶມວັນສ້າງຕັ້ງສະຫະພັນກຳມະບານລາວ ຄົບຮອບ 68 ປີ.



ວັນທີ 29 ກຸມພາ 2024, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດປາຖະກະຖາເຊື່ອມຊຶມເອກະສານ ຄື: ວັນສ້າງຕັ້ງສະຫະພັນກຳມະບານລາວ ຄົບຮອບ 68 ປີ ໂດຍການເປັນ ປະທານຂອງສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ປະທານກວດກາ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ມີບັນດາສະຫາຍໃນຄະນະບໍລິຫານງານພັກ, ຄະນະບໍລິຫານງານສະຫະພັນກຳມະບານ ຄຕພ ຕະຫຼອດຮອດສະມາຊິກກຳມະບານ ທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມ 130 ສະຫາຍ.

ສະຫາຍ ເກີລ໌ ຢ່າງກໍ່, ກຳມະການຄະນະພັກ ຄຕພ, ກຳມະການຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ, ປະທານສະຫະພັນກຳມະບານ ຄຕພ ໄດ້ຍົກໃຫ້ເຫັນການກຳເນີດ ການເຕີບໃຫຍ່ຂະຫຍາຍຕົວ ແລະ ມູນເຊື້ອປະຕິວັດ, ຜົນງານປະກອບ ສ່ວນໃນພາລະກິດຕໍ່ສູ້ປົດປ່ອຍຊາດ ກໍຄືພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ; ປຸກລະດົມ ແລະ ສ້າງຈິດສຳນຶກສະມາຊິກກຳມະບານ ມີຄວາມບຸກບືນ, ປະກອບສ່ວນເຂົ້າໃນການ ເຄື່ອນໄຫວວຽກງານ

ກຳມະບານ ແລະ ເປັນເຈົ້າປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ ຕິດພັນກັບຂໍ້ແຂ່ງຂັນ “ຮັກຊາດ ແລະ ພັດທະນາ” ໃຫ້ເປັນຂະບວນການກວ້າງຂວາງ ແລະ ຟົດຟື້ນກວ່າເກົ່າ, ໂດຍສະເພາະການປະກອບສ່ວນເຂົ້າໃນການປຸກລະດົມຂົນຂວາຍ, ສຶກສາອົບຮົມສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານລາວ ໃຫ້ເປັນເຈົ້າການປົກປັກຮັກສາ ແລະ ພັດທະນາປະເທດຊາດ ກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ ຕາມແນວທາງນະໂຍບາຍຂອງພັກ ພ້ອມດຽວກັນນີ້, ກໍ່ໄດ້ມີການຖາມ-ຕອບ ຄວາມຮູ້ກ່ຽວກັບ ປະທານຄຳໄຕ ສີພັນດອນ ໃນໂອກາດສະເຫຼີມສະຫຼອງວັນເກີດຂອງເພິ່ນ ຄົບຮອບ 100 ປີ.